**DEPARTMENT OF HEALTH SERVICES**
Division of Medicaid Services
P-02484L (12/2019)

# ບັດຄະແນນ Managed Care Organization (MCO)
# ຄໍາຖາມທີ່ຖາມເລື້ອຍໆ

## ຈຸດປະສົງຂອງບັດຄະແນນນີ້ແມ່ນຫຍັງ?

ຈຸດປະສົງຂອງບັດຄະແນນແມ່ນເພື່ອຊ່ວຍທ່ານເລືອກ managed care organization (MCO) ອີງຕາມປັດໃຈຕ່າງໆທີ່ສໍາຄັນທີ່ສຸດຕໍ່ທ່ານ. ບັດຄະແນນໃຫ້ຂໍ້ມູນແກ່ທ່ານກ່ຽວກັບວ່າ ສະມາຊິກປັດຈຸບັນມີຄວາມຮູ້ສຶກກ່ຽວກັບ MCO ຂອງພວກເຂົາແນວໃດ ແລະ MCO ເຮັດໄດ້ຕາມມາດຕະຖານຂອງລັດດີປານໃດ. ນອກນັ້ນບັດຄະແນນຍັງໃຫ້ຂໍ້ມູນຕິດຕໍ່ ແລະ ຂໍ້ເທັດຈິງອື່ນໆກ່ຽວກັບ MCOs ທີ່ມີໃຫ້ທ່ານເລືອກໄດ້.

## ຂໍ້ມູນຢູ່ໃນບັດຄະແນນມາຈາກໃສ?

ຂໍ້ມູນຢູ່ໃນບັດຄະແນນມາຈາກຫຼາຍແຫຼ່ງຂໍ້ມູນ:

- **ພາກການສໍາຫຼວດສະມາຊິກ**
  ສະແດງໃຫ້ເຫັນຜົນໄດ້ຮັບຈາກການສໍາຫຼວດຄວາມພໍໃຈຂອງສະມາຊິກປີ 2018 ຂອງລັດ
- **ພາກຄຸນນະພາບ ແລະ ການປະຕິບັດຕາມ**
  ສະແດງຜົນໄດ້ຮັບຈາກການທົບທວນການປະຕິບັດຕາມຄຸນນະພາບ MCO ປະຈໍາປີຂອງລັດ
- **ພາກຄຸນລັກສະນະຂອງທີມງານເບິ່ງແຍງດູແລ** ແລະ
  ພາກຂໍ້ມູນເພີ່ມເຕີມສະແດງຂໍ້ມູນທີ່ໄດ້ລາຍງານໂດຍ MCOs ກ່ຽວກັບອົງການຈັດຕັ້ງຂອງພວກເຂົາ

## ການສໍາຫຼວດຄວາມພໍໃຈຂອງສະມາຊິກແມ່ນຫຍັງ?

ການສໍາຫຼວດຄວາມພໍໃຈຂອງສະມາຊິກແມ່ນຊຸດຄໍາຖາມປະຈໍາປີທີ່ໄດ້ສົ່ງໄປໃຫ້ສະມາຊິກຂອງແຕ່ລະ MCO ໃນປັດຈຸບັນເພື່ອເກັບກໍາຄໍາຕິຊົມກ່ຽວກັບປະສົບການຂອງພວກເຂົາກັບ MCO ຂອງພວກເຂົາ. ລັດເກັບເອົາ ແລະ ວິເຄາະຄໍາຕອບການສໍາຫຼວດເພື່ອໃຫ້ຮູ້ວ່າ ສະມາຊິກມີຄວາມພໍໃຈກັບທີມງານເບິ່ງແຍງດູແລຂອງພວກເຂົາແນວໃດ, ພວກເຂົາມີສ່ວນຮ່ວມແນວໃດໃນການສ້າງແຜນການເບິ່ງແຍງດູແລຂອງພວກເຂົາ ແລະ MCO ຊ່ວຍໃຫ້ພວກເຂົາບັນລຸໄດ້ຕາມຄວາມຕ້ອງການຂອງພວກເຂົາແນວໃດ.

## ການທົບທວນການປະຕິບັດຕາມຄຸນນະພາບ MCO ແມ່ນຫຍັງ?

ການທົບທວນການປະຕິບັດຕາມຄຸນນະພາບ MCO ແມ່ນການປະເມີນທີ່ບັນທຶກວ່າ MCOs ເຮັດໄດ້ຕາມມາດຕະຖານການປະຕິບັດການສະເພາະທີ່ລັດກໍານົດໄດ້ດີປານໃດ. ໄດ້ມີການທົບທວນຄືນທຸກໆປີໂດຍອົງການທົບທວນຄຸນນະພາບທາງນອກທີ່ເຮັດວຽກກັບລັດ.

ອົງການທົບທວນຄຸນນະພາບທາງນອກຕິດຕາມກວດກາເພື່ອໃຫ້ແນ່ໃຈວ່າ MCO ມີນະໂຍບາຍ, ຂັ້ນຕອນດໍາເນີນການ ແລະ ຂະບວນການພ້ອມທີ່ຈະໃຫ້ການບໍລິການຄຸນນະພາບສູງແກ່ສະມາຊິກ.

### ບໍ່ຫວັງຜົນກໍາໄລ ແລະ ຫວັງຜົນກໍາໄລໝາຍຄວາມວ່າແນວໃດ?

ປະເພດຂອງພາກພ່ວຍງານຢູ່ໃນບັດຄະແນນອະທິບາຍໃຫ້ຮູ້ວ່າ ແຕ່ລະ MCO ແມ່ນອົງການປະເພດໃດ. ອົງການບໍ່ຫວັງຜົນກໍາໄລແມ່ນກຸ່ມທີ່ຈັດຕັ້ງຂຶ້ນມາເພື່ອຈຸດປະສົງທີ່ບໍ່ແມ່ນການສ້າງຜົນກໍາໄລ ແລະ ບໍ່ມີລາຍຮັບຂອງອົງການສ່ວນໃດຖືກນໍາໄປແບ່ງປັນໃຫ້ກັບບັນດາຫົວໜ້າ ຫຼື ພະນັກງານອົງການ. ສໍາລັບອົງການຫວັງຜົນກໍາໄລແມ່ນທຸລະກິດທີ່ດໍາເນີນເພື່ອຈຸດປະສົງຂອງການສ້າງຜົນກໍາໄລ.

### ບັດຄະແນນໄດ້ຮັບການປັງປຸງ (ອັບເດດ) ຫຼ້າສຸດເມື່ອໃດ? ມັນໄດ້ຮັບການປັບປຸງເລື້ອຍປານໃດ?

ບັດຄະແນນໄດ້ຮັບການປັບປຸງຫຼ້າສຸດໃນປີ 2019. ມັນໄດ້ຮັບການປັບປຸງປະຈໍາປີ.

### ເປັນຫຍັງບັດຄະແນນບໍ່ໃຫ້ຂໍ້ມູນອື່ນກ່ຽວກັບບັນດາ MCO ທີ່ຂ້ອຍສົນໃຈ?

ບັດຄະແນນສະເໜີແຕ່ຂໍ້ມູນທີ່ລັດຮັບຮອງຄວາມຖືກຕ້ອງເທົ່ານັ້ນ.
ລໍາດັບຄະແນນທີ່ໃຫ້ໄວ້ຢູ່ໃນບັດຄະແນນໄດ້ອີງຕາມຂໍ້ມູນສາມາດກວດສອບໄດ້ໃນປັດຈຸບັນເທົ່ານັ້ນ, ດ້ວຍການໃຫ້ປັດໃຈຕາມຈຸດປະສົງສ່ວນໃຫຍ່ແກ່ທ່ານເພື່ອຊ່ວຍໃຫ້ທ່ານເລືອກ MCO ຂອງທ່ານ.

# ບັດຄະແນນ Managed Care Organization (MCO)
## ຄູ່ມືແນະນຳລະບົບວັດແທກ

| ການສຳຫຼວດສະມາຊິກ | |
|---|---|
| **ລະບົບວັດແທກ** | **ຄວາມພໍໃຈໂດຍລວມ** |
| **ແຫຼ່ງຂໍ້ມູນ** | ການສຳຫຼວດຄວາມພໍໃຈປະຈຳປີ 2018—<br>ຄະແນນລວມດ້ວຍການໃຊ້ຄຳຕອບຈາກຄຳຖາມການສຳຫຼວດຕໍ່ໄປນີ້:<br>1. ທ່ານສາມາດຕິດຕໍ່ທີມງານເບິ່ງແຍງດູແລຂອງທ່ານໄດ້ບໍ ເມື່ອທ່ານຕ້ອງການຕິດຕໍ່?<br>2. ທ່ານໄດ້ຮັບການຊ່ວຍເຫຼືອທີ່ທ່ານຕ້ອງການຈາກທີມງານເບິ່ງແຍງດູແລຂອງທ່ານເລື້ອຍປານໃດ?<br>3. ທີມງານເບິ່ງແຍງດູແລຂອງທ່ານອະທິບາຍສິ່ງຕ່າງໆໃຫ້ທ່ານໄດ້ຈະແຈ້ງປານໃດ?<br>4. ທີມງານເບິ່ງແຍງດູແລຂອງທ່ານຕັ້ງໃຈຟັງທ່ານດີປານໃດ?<br>5. ທີມງານເບິ່ງແຍງດູແລຂອງທ່ານປະຕິບັດຕໍ່ທ່ານດ້ວຍຄວາມເຄົາລົບສໍ່າໃດ?<br>6. ທີມງານເບິ່ງແຍງດູແລຂອງທ່ານອະທິບາຍທາງເລືອກການສະໜັບສະໜູນຕົວເອງຕາມທີ່ສັ່ງໃຫ້ກັບທ່ານດີປານໃດ?<br>7. ທ່ານມີສ່ວນຮ່ວມໃນຂະບວນການຕັດສິນໃຈກ່ຽວກັບແຜນການເບິ່ງແຍງດູແລຂອງທ່ານແນວໃດ?<br>8. ແຜນການເບິ່ງແຍງດູແລຂອງທ່ານສະໜັບສະໜູນກິດຈະກຳທີ່ທ່ານຕ້ອງການເຮັດຢູ່ໃນຊຸມຊົນຂອງທ່ານໄດ້ດີປານໃດ, ລວມທັງການຢ້ຽມຢາມຄອບຄົວ ແລະ ໝູ່, ການເຮັດວຽກ, ການເປັນອາສາສະໝັກ ແລະ ອື່ນໆ?<br>9. ແຜນການເບິ່ງແຍງດູແລຂອງທ່ານລວມເອົາສິ່ງຕ່າງໆທີ່ສຳຄັນຕໍ່ທ່ານເຂົ້າຫຼາຍປານໃດ?<br>10. ໂດຍລວມແລ້ວ, ຄົນຜູ້ທີ່ໃຫ້ການສະໜັບສະໜູນ ແລະ ການບໍລິການແກ່ທ່ານປະຕິບັດຕໍ່ທ່ານດ້ວຍຄວາມເຄົາລົບຫຼາຍປານໃດ?<br>11. ການສະໜັບສະໜູນ ແລະ ການບໍລິການທີ່ທ່ານໄດ້ຮັບໄດ້ຕາມຄວາມຕ້ອງການຂອງທ່ານດີປານໃດ?<br>12. ໂດຍລວມແລ້ວ, ທ່ານມັກ MCO ຂອງທ່ານຫຼາຍປານໃດ? |
| **ລະບົບການໃຫ້ຄະແນນ** | <table><tr><td>**ຄະແນນ**</td><td>**ດາວ**</td><td>**ອັນດັບຄະແນນ**</td></tr></table> |

| | | |
|---|---|---|
| 90.0% - 100.0% | 5 | ດີເລີດ |
| 80.0% - 89.9% | 4 | ດີຫຼາຍ |
| 70.0% - 79.9% | 3 | ດີ |
| 60.0% - 69.9% | 2 | ປານກາງ |
| < 60.0% | 1 | ບໍ່ດີ |

ເປີເຊັນຂອງຄຳຕອບຄຳຖາມການສຳຫຼວດທັງໝົດທີ່ "ພໍໃຈຫຼາຍ" ຫຼື "ພໍໃຈເປັນພິເສດ."

<table>
<tr><th>ລະບົບວັດແທກ</th><th>ການຕອບຮັບຂອງທີມງານເບິ່ງແຍງດູແລ</th></tr>
<tr><td>ແຫຼ່ງຂໍ້ມູນ</td><td>ການສຳຫຼວດຄວາມພໍໃຈປະຈຳປີ 2018—<br>ຄະແນນລວມດ້ວຍການໃຊ້ຄຳຕອບຈາກຄຳຖາມການສຳຫຼວດຕໍ່ໄປນີ້:<br>1. ທ່ານສາມາດຕິດຕໍ່ທີມງານເບິ່ງແຍງດູແລຂອງທ່ານໄດ້ບໍ ເມື່ອທ່ານຕ້ອງການຕິດຕໍ່?<br>2. ທ່ານໄດ້ຮັບການຊ່ວຍເຫຼືອທີ່ທ່ານຕ້ອງການຈາກທີມງານເບິ່ງແຍງດູແລຂອງທ່ານເລື້ອຍປານໃດ?</td></tr>
<tr><td>ລະບົບການໃຫ້ຄະແນນ</td><td>
<table>
<tr><th>ຄະແນນ</th><th>ດາວ</th><th>ອັນດັບຄະແນນ</th></tr>
<tr><td>90.0% - 100.0%</td><td>5</td><td>ດີເລີດ</td></tr>
<tr><td>80.0% - 89.9%</td><td>4</td><td>ດີຫຼາຍ</td></tr>
<tr><td>70.0% - 79.9%</td><td>3</td><td>ດີ</td></tr>
<tr><td>60.0% - 69.9%</td><td>2</td><td>ປານກາງ</td></tr>
<tr><td>< 60.0%</td><td>1</td><td>ບໍ່ດີ</td></tr>
</table>
ເປີເຊັນຂອງຄຳຕອບຄຳຖາມການສຳຫຼວດທີ່ "ພໍໃຈຫຼາຍ" ຫຼື "ພໍໃຈເປັນພິເສດ."</td></tr>
</table>

<table>
<tr><th>ລະບົບວັດແທກ</th><th>ຄຸນນະພາບຂອງການສື່ສານຂອງທີມງານເບິ່ງແຍງດູແລ</th></tr>
<tr><td>ແຫຼ່ງຂໍ້ມູນ</td><td>ການສຳຫຼວດຄວາມພໍໃຈປະຈຳປີ 2018—<br>ຄະແນນລວມດ້ວຍການໃຊ້ຄຳຕອບຈາກຄຳຖາມການສຳຫຼວດຕໍ່ໄປນີ້:<br>1. ທີມງານເບິ່ງແຍງດູແລຂອງທ່ານອະທິບາຍສິ່ງຕ່າງໆໃຫ້ທ່ານໄດ້ຈະແຈ້ງປານໃດ?<br>2. ທີມງານເບິ່ງແຍງດູແລຂອງທ່ານຕັ້ງໃຈຟັງທ່ານດີປານໃດ?<br>3. ທີມງານເບິ່ງແຍງດູແລຂອງທ່ານປະຕິບັດຕໍ່ທ່ານດ້ວຍຄວາມເຄົາລົບສໍ່າໃດ?</td></tr>
<tr><td>ລະບົບການໃຫ້ຄະແນນ</td><td>
<table>
<tr><th>ຄະແນນ</th><th>ດາວ</th><th>ອັນດັບຄະແນນ</th></tr>
<tr><td>90.0% - 100.0%</td><td>5</td><td>ດີເລີດ</td></tr>
<tr><td>80.0% - 89.9%</td><td>4</td><td>ດີຫຼາຍ</td></tr>
<tr><td>70.0% - 79.9%</td><td>3</td><td>ດີ</td></tr>
<tr><td>60.0% - 69.9%</td><td>2</td><td>ປານກາງ</td></tr>
<tr><td>< 60.0%</td><td>1</td><td>ບໍ່ດີ</td></tr>
</table>
ເປີເຊັນຂອງຄຳຕອບຄຳຖາມການສຳຫຼວດທີ່ “ພໍໃຈຫຼາຍ” ຫຼື “ພໍໃຈເປັນພິເສດ.”</td></tr>
</table>

| **ຄຸນນະພາບ ແລະ ການປະຕິບັດຕາມ** | |
|---|---|
| **ລະບົບວັດແທກ** | **ມາດຕະຖານຄຸນນະພາບໂດຍລວມ** |
| **ແຫຼ່ງຂໍ້ມູນ** | ການທົບທວນການປະຕິບັດຕາມຄຸນນະພາບ (QCR) ຂອງອົງການທົບທວນຄຸນນະພາບທາງນອກ 2018–2019<br><br>ຄະແນນນີ້ມາຈາກການລວມການປະຕິບັດຂອງ MCO ໃນໜ່ວຍເມຕຣິກກ່ຽວຂ້ອງກັບ:<br>• **ສິດແລະ ການປົກປ້ອງ**: MCO ເຮັດໄດ້ດີປານໃດໃນການແຈ້ງໃຫ້ສະມາຊິກຮູ້ເລື່ອງສິດຂອງພວກເຂົາ ແລະ ເຮັດວຽກກັບພວກເຂົາເພື່ອຮັກສາສິດເຫຼົ່ານັ້ນໄວ້.<br>• **ຕົວເລືອກຜູ້ສະໜອງ ແລະ ການບໍລິການທັນເວລາ**: MCO ເຮັດໄດ້ດີປານໃດໃນການສະໜັບສະໜູນການເຂົ້າເຖິງການບໍລິການ ແລະ ຜູ້ສະໜອງ, ພ້ອມທັງຂະບວນການປັບປຸງເພື່ອເຮັດໃຫ້ມີຊ່ອງຫວ່າງນ້ອຍທີ່ສຸດ ຫຼື ເຮັດໃຫ້ການບໍລິການຊ້າລົງ.<br>• **ລະບົບການຮ້ອງທຸກ**: MCO ເຮັດໄດ້ດີປານໃດໃນການເຮັດວຽກກັບສະມາຊິກເພື່ອແກ້ໄຂຂໍ້ຂັດແຍ້ງ ແລະ ໃຫ້ພວກເຂົາໄດ້ຮັບແຈ້ງຂໍ້ມູນຕະຫຼອດຂະບວນການ. |
| **ລະບົບການໃຫ້ຄະແນນ** | ເປີເຊັນຂອງທຸກລາຍການຢູ່ໃນ QCR ທີ່ບັນລຸໄດ້ຕາມມາດຖານ "ບັນລຸໄດ້" ຫຼື "ບັນລຸໄດ້ບາງສ່ວນ." ອັນນີ້ລວມມີລາຍການຢູ່ໃນທັງໝົດສາມພາກຂອງ QCR. |

| **ຄະແນນ** | **ດາວ** | **ອັນດັບຄະແນນ** |
|---|---|---|
| 90.0% - 100.0% | 5 | ດີເລີດ |
| 80.0% - 89.9% | 4 | ດີຫຼາຍ |
| 70.0% - 79.9% | 3 | ດີ |
| 60.0% - 69.9% | 2 | ປານກາງ |
| < 60.0% | 1 | ບໍ່ດີ |

<table>
<tr><th>ລະບົບວັດແທກ</th><th>ສິດ ແລະ ການປົກປ້ອງ</th></tr>
<tr><td>ແຫຼ່ງຂໍ້ມູນ</td><td>ການທົບທວນການປະຕິບັດຕາມຄຸນນະພາບ (QCR) ຂອງອົງການທົບທວນຄຸນນະພາບທາງນອກ 2018–2019:<br><br>ພາກສິດ ແລະ ການປົກປ້ອງຜູ້ລົງທະບຽນ<br>MCO ເຮັດໄດ້ດີປານໃດໃນການແຈ້ງໃຫ້ສະມາຊິກຮູ້ເລື່ອງສິດຂອງພວກເຂົາ ແລະ ເຮັດວຽກກັບພວກເຂົາເພື່ອຮັກສາສິດເຫຼົ່ານັ້ນໄວ້.</td></tr>
<tr><td>ລະບົບການໃຫ້ຄະແນນ</td><td><table>
<tr><th>ຄະແນນ</th><th>ດາວ</th><th>ອັນດັບຄະແນນ</th></tr>
<tr><td>90.0% - 100.0%</td><td>5</td><td>ດີເລີດ</td></tr>
<tr><td>80.0% - 89.9%</td><td>4</td><td>ດີຫຼາຍ</td></tr>
<tr><td>70.0% - 79.9%</td><td>3</td><td>ດີ</td></tr>
<tr><td>60.0% - 69.9%</td><td>2</td><td>ປານກາງ</td></tr>
<tr><td>< 60.0%</td><td>1</td><td>ບໍ່ດີ</td></tr>
</table>ເປີເຊັນຂອງລາຍການຢູ່ໃນພາກສິດ ແລະ ການປົກປ້ອງຜູ້ລົງທະບຽນ QCR ທີ່ບັນລຸໄດ້ຕາມມາດຖານ “ບັນລຸໄດ້” ຫຼື “ບັນລຸໄດ້ບາງສ່ວນ.”</td></tr>
<tr><th>ລະບົບວັດແທກ</th><th>ຕົວເລືອກຜູ້ສະໜອງ ແລະ ການບໍລິການທັນເວລາ</th></tr>
<tr><td>ແຫຼ່ງຂໍ້ມູນ</td><td>ການທົບທວນການປະຕິບັດຕາມຄຸນນະພາບ (QCR) ຂອງອົງການທົບທວນຄຸນນະພາບທາງນອກ 2018–2019:<br><br>ພາກການຮັບປະກັນຄຸນນະພາບ ແລະ ການປັບປຸງຂະບວນການ<br>MCO ເຮັດໄດ້ດີປານໃດໃນການສະໜັບສະໜູນການເຂົ້າເຖິງການບໍລິການ ແລະ ຜູ້ສະໜອງ, ພ້ອມທັງຂະບວນການປັບປຸງເພື່ອເຮັດໃຫ້ມີຊ່ອງຫວ່າງນ້ອຍທີ່ສຸດ ຫຼື ເຮັດໃຫ້ການບໍລິການຊ້າລົງ.</td></tr>
</table>

<table>
<tr>
<td>ລະບົບການໃຫ້ຄະແນນ</td>
<td>
<table>
<tr><th>ຄະແນນ</th><th>ດາວ</th><th>ອັນດັບຄະແນນ</th></tr>
<tr><td>90.0% - 100.0%</td><td>5</td><td>ດີເລີດ</td></tr>
<tr><td>80.0% - 89.9%</td><td>4</td><td>ດີຫຼາຍ</td></tr>
<tr><td>70.0% - 79.9%</td><td>3</td><td>ດີ</td></tr>
<tr><td>60.0% - 69.9%</td><td>2</td><td>ປານກາງ</td></tr>
<tr><td>< 60.0%</td><td>1</td><td>ບໍ່ດີ</td></tr>
</table>
ເປີເຊັນຂອງທຸກລາຍການຢູ່ໃນພາກການຮັບປະກັນຄຸນນະພາບ ແລະ ການປັບປຸງຂະບວນການ QCR ທີ່ບັນລຸໄດ້ຕາມມາດຖານ “ບັນລຸໄດ້” ຫຼື “ບັນລຸໄດ້ບາງສ່ວນ.”
</td>
</tr>
</table>

| ລະບົບວັດແທກ | ລະບົບການຮ້ອງທຸກ |
|---|---|
| **ແຫຼ່ງຂໍ້ມູນ** | ການທົບທວນການປະຕິບັດຕາມຄຸນນະພາບ (QCR) ຂອງອົງການທົບທວນຄຸນນະພາບທາງນອກ 2018–2019:<br><br>ພາກລະບົບການຮ້ອງທຸກ<br>**MCO ເຮັດໄດ້ດີປານໃດໃນການເຮັດວຽກກັບສະມາຊິກເພື່ອແກ້ໄຂຂໍ້ຂັດແຍ້ງ ແລະ ໃຫ້ພວກເຂົາໄດ້ຮັບແຈ້ງຂໍ້ມູນຕະຫຼອດຂະບວນການ.** |
| **ລະບົບການໃຫ້ຄະແນນ** | (see table below)<br>ເປີເຊັນຂອງທຸກລາຍການຢູ່ໃນພາກລະບົບການຮ້ອງທຸກ QCR ທີ່ບັນລຸໄດ້ຕາມມາດຖານ "ບັນລຸໄດ້" ຫຼື "ບັນລຸໄດ້ບາງສ່ວນ." |

| ຄະແນນ | ດາວ | ອັນດັບຄະແນນ |
|---|---|---|
| 90.0% - 100.0% | 5 | ດີເລີດ |
| 80.0% - 89.9% | 4 | ດີຫຼາຍ |
| 70.0% - 79.9% | 3 | ດີ |
| 60.0% - 69.9% | 2 | ປານກາງ |
| < 60.0% | 1 | ບໍ່ດີ |

| ຄຸນລັກສະນະທີມງານເບິ່ງແຍງດູແລ | |
|---|---|
| **ລະບົບວັດແທກ** | **ການໝູນວຽນຜູ້ຈັດການເບິ່ງແຍງດູແລ** |
| **ແຫຼ່ງຂໍ້ມູນ** | ຂໍ້ມູນປະຈໍາປີ 2016–2018 ທີ່ບັນດາ MCO ລາຍງານໃຫ້ກັບພະແນກບໍລິການສຸຂະພາບຂອງລັດວິດສະຄອນຊິນ |
| **ລະບົບການໃຫ້ຄະແນນ** | |

| **ຄະແນນ** | **ດາວ** | **ອັນດັບຄະແນນ** |
|---|---|---|
| 0.0% - 10.0% | 5 | ດີເລີດ |
| 10.1% - 20.0% | 4 | ດີຫຼາຍ |
| 20.1% - 30.0% | 3 | ດີ |
| 30.1% - 40.0% | 2 | ປານກາງ |
| > 40.0% | 1 | ບໍ່ດີ |

ເປີເຊັນຂອງຜູ້ຈັດການເບິ່ງແຍງດູແລທີ່ແຍກອອກຈາກ MCO, ຄິດໄລ່ຕາມການສະເລ່ຍສາມປີ.

<table>
<tr><th>ລະບົບວັດແທກ</th><th>ການໝູນວຽນພະຍາບານ</th></tr>
<tr><td>ແຫຼ່ງຂໍ້ມູນ</td><td>ຂໍ້ມູນປະຈຳປີ 2016–2018 ທີ່ບັນດາ MCO<br>ລາຍງານໃຫ້ກັບພະແນກບໍລິການສຸຂະພາບຂອງລັດວິດສະຄອນຊິນ</td></tr>
<tr><td>ລະບົບການໃຫ້ຄະແນນ</td><td>
<table>
<tr><th>ຄະແນນ</th><th>ດາວ</th><th>ອັນດັບຄະແນນ</th></tr>
<tr><td>0.0% - 10.0%</td><td>5</td><td>ດີເລີດ</td></tr>
<tr><td>10.1% - 20.0%</td><td>4</td><td>ດີຫຼາຍ</td></tr>
<tr><td>20.1% - 30.0%</td><td>3</td><td>ດີ</td></tr>
<tr><td>30.1% - 40.0%</td><td>2</td><td>ປານກາງ</td></tr>
<tr><td>> 40.0%</td><td>1</td><td>ບໍ່ດີ</td></tr>
</table>
ເປີເຊັນຂອງພະຍາບານທີ່ແຍກອອກຈາກ MCO, ຄິດໄລ່ຕາມການສະເລ່ຍສາມປີ.</td></tr>
<tr><th>ລະບົບວັດແທກ</th><th>ອັດຕາສ່ວນຜູ້ຈັດການເບິ່ງແຍງດູແລຕໍ່ສະມາຊິກ</th></tr>
<tr><td>ແຫຼ່ງຂໍ້ມູນ</td><td>ອັດຕາສ່ວນໄດ້ລາຍງານຕັ້ງແຕ່ວັນທີ 1 ກໍລະກົດ 2019<br>ອີງຕາມການທຽບເທົ່າເຕັມເວລາ (FTE) ແລະ ການລົງທະບຽນປັດຈຸບັນ.</td></tr>
<tr><td>ລະບົບການໃຫ້ຄະແນນ</td><td>ບໍ່ໄດ້ກຳນົດການໃຫ້ຄະແນນສຳລັບອັດຕາສ່ວນພະນັກງານຕໍ່ສະມາຊິກ.<br>ທຸກອັດຕາສ່ວນພະນັກງານ MCO ແມ່ນເປັນໄປຕາມມາດຕະຖານຂອງລັດ.</td></tr>
<tr><th>ລະບົບວັດແທກ</th><th>ອັດຕາສ່ວນພະຍາບານຕໍ່ສະມາຊິກ</th></tr>
<tr><td>ແຫຼ່ງຂໍ້ມູນ</td><td>ອັດຕາສ່ວນໄດ້ລາຍງານຕັ້ງແຕ່ວັນທີ 1 ກໍລະກົດ 2019<br>ອີງຕາມການທຽບເທົ່າເຕັມເວລາ (FTE) ແລະ ການລົງທະບຽນປັດຈຸບັນ.</td></tr>
<tr><td>ລະບົບການໃຫ້ຄະແນນ</td><td>ບໍ່ໄດ້ກຳນົດການໃຫ້ຄະແນນສຳລັບອັດຕາສ່ວນພະນັກງານຕໍ່ສະມາຊິກ.<br>ທຸກອັດຕາສ່ວນພະນັກງານ MCO ແມ່ນເປັນໄປຕາມມາດຕະຖານຂອງລັດ.</td></tr>
</table>

| | |
|---|---|
| **ລະບົບວັດແທກ** | **ອັດຕາສ່ວນພະນັກງານຝຶກຫັດຕໍ່ສະມາຊິກ**<br>*(ທຸ້ນສ່ວນເບິ່ງແຍງດູແລຄອບຄົວເທົ່ານັ້ນ)* |
| **ແຫຼ່ງຂໍ້ມູນ** | ອັດຕາສ່ວນໄດ້ລາຍງານຕັ້ງແຕ່ວັນທີ 1 ກໍລະກົດ 2019<br>ອີງຕາມການທຽບເທົ່າເຕັມເວລາ (FTE) ແລະ ການລົງທະບຽນປັດຈຸບັນ. |
| **ລະບົບການໃຫ້ຄະແນນ** | ບໍ່ໄດ້ກຳນົດການໃຫ້ຄະແນນສຳລັບອັດຕາສ່ວນພະນັກງານຕໍ່ສະມາຊິກ.<br>ທຸກອັດຕາສ່ວນພະນັກງານ MCO ແມ່ນເປັນໄປຕາມມາດຕະຖານຂອງລັດ. |